ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 1300 /ກປ

ນະຄອນຫຼວງວຽງຈັນ, ວັນທີ 08 OCT 2021

# ຄຳສັ່ງ

## ວ່າດ້ວຍການເພີ່ມທະວີການປັບປຸງ ສູນ, ສະຖານີ ຕິດພັນກັບການຫັນ ພະນັກງານ-ລັດຖະກອນ ລົງປະຈຳຢູ່ບັນດາສູນ, ສະຖານີ ຂອງສູນກາງ ແລະ ທ້ອງຖິ່ນ

ເຖິງ: - ຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ບັນດາຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ມະຕິກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ 5 ປີ (2021-2025).

ໃນໄລຍະຜ່ານມາ, ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ຖືສຳຄັນ ແລະ ເອົາໃຈໃສ່ໃນການປັບປຸງ ສູນ, ສະຖານີ ຂັ້ນຕ່າງໆ ພ້ອມທັງຫັນພະນັກງານລົງສູ່ການຜະລິດ ປະຈຳຢູ່ ບັນດາສູນ, ສະຖານີ ດັ່ງກ່າວ. ຜ່ານການປະຕິບັດຕົວຈິງ ເຫັນວ່າ: ບັນດາສູນ, ສະຖານີ ຍັງບໍ່ທັນມີຄວາມເຂັ້ມແຂງ, ບໍ່ສາມາດຈັດຕັ້ງປະຕິບັດໜ້າທີ່ຕາມພາລະບົດບາດ, ໜ້າທີ່ການເມືອງຂອງຕົນໄດ້ດີເທົ່າທີ່ຄວນ. ສະນັ້ນ, ເພື່ອເຮັດໃຫ້ສູນ, ສະຖານີ ມີຄວາມເຂັ້ມແຂງ, ສາມາດເຄື່ອນໄຫວວຽກງານໄດ້ຢ່າງຄ່ອງຕົວ, ມີປະສິດທິພາບ ແລະ ມີປະສິດທິຜົນ, ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ກໍຄືມະຕິ VI ຂອງອົງຄະນະພັກກະຊວງກະສິກາ ແລະ ປ່າໄມ້ ແລະ ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ 5 ປີ (2021-2025) ໃຫ້ມີຜົນສຳເລັດ.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ໃຫ້ກວດກາຄືນບັນດາສູນ, ສະຖານີ ທີ່ມີຢູ່ໃນຄວາມຮັບຜິດຊອບຂອງຕົນ ພ້ອມທັງສຸມໃສ່ ປັບປຸງ, ພັດທະນາ ໃຫ້ເຂັ້ມແຂງ, ຮັບປະກັນການເຄື່ອນໄຫວວຽກງານໃຫ້ມີປະສິດທິພາບດ້ວຍການປະກອບວິຊາການທີ່ດີ, ປະກອບວັດຖຸ-ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ໃຫ້ແກ່ສູນ, ສະ

ຖານີຕ່າງໆ ເພື່ອຄົ້ນຄວ້າ, ສະໜອງແນວພັນພືດ, ແນວພັນສັດ, ແນວພັນໄມ້ ແລະ ຝຶກອົບຮົມ, ຖ່າຍທອດບົດຮຽນ, ເຕັກໂນໂລຊີ ການປູກ-ການລ້ຽງ ໃຫ້ແກ່ຊາວກະສິກອນ, ຜູ້ປະກອບການ ແລະ ສັງຄົມ ເພື່ອຮັບໃຊ້ໃນການສົ່ງເສີມການຜະລິດພາຍໃນ ທົດແທນການນຳເຂົ້າ ແລະ ການຜະລິດສິນຄ້າສົ່ງອອກ ຕາມລະບົບນິເວດກະສິກຳ ແລະ ເງື່ອນໄຂທ່າແຮງ ຂອງແຕ່ລະສູນ, ສະຖານີ;

2. ໃຫ້ຄົ້ນຄວ້າເອົາພະນັກງານ ຢູ່ຫ້ອງການ, ບັນດາກົມ, ສະຖາບັນ ເພື່ອປະກອບບຸກຄະລາກອນໃຫ້ບັນດາສູນ ທີ່ຂຶ້ນກັບກະຊວງ. ພ້ອມນັ້ນ, ກໍຈັດວາງສັບຊ້ອນ ບຸກຄະລາກອນຢູ່ ສູນ, ສະຖານີ ທີ່ມີແລ້ວຄືນໃໝ່. ສຳລັບຢູ່ຂັ້ນທ້ອງຖິ່ນ ແມ່ນໃຫ້ຄົ້ນຄວ້າຄັດເລືອກເອົາພະນັກງານຈາກບັນດາຂະແໜງ ທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ; ພະນັກງານຈາກບັນດາໜ່ວຍງານ ທີ່ຂຶ້ນກັບຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ ປະກອບໃຫ້ບັນດາສູນ, ສະຖານີ ຂອງແຂວງ ແລະ ສູນກາງ ທີ່ຕັ້ງຢູ່ທ້ອງຖິ່ນຕົນ ໃຫ້ພຽງພໍກັບຕຳແໜ່ງງານ ຕາມຄວາມຮຽກຕ້ອງການໃນການປະຕິບັດວາລະແຫ່ງຊາດ ກໍຄືພາລະບົດບາດ ຂອງສູນ, ສະຖານີ;

3. ເປົ້າໝາຍພະນັກງານຫັນລົງສູນ, ສະຖານີ ຕ້ອງຄັດເລືອກເອົາພະນັກງານ-ລັດຖະກອນ ທີ່ມີຄວາມຮູ້ຄວາມສາມາດ, ມີຄຸນສົມບັດ, ມີຄວາມດຸໝັ່ນ, ມີຄວາມເສຍສະຫຼະ ເພື່ອຜົນປະໂຫຍດສ່ວນລວມ; ພະນັກງານທີ່ສຳເລັດການສຶກສາລະດັບ ປະລິນຍາໂທ, ປະລິນຍາເອກ; ພະນັກງານ ທີ່ຢູ່ໃນແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຫຼື ພະນັກງານ ທີ່ມີເປົ້າໝາຍສ້າງເປັນພະນັກງານສືບທອດປ່ຽນແທນ ເພື່ອໃຫ້ພະນັກງານເຫຼົ່ານັ້ນ ໄດ້ຜ່ານການຝຶກຝົນ-ທົດສອບວຽກງານຕົວຈິງຢູ່ທ້ອງຖິ່ນ, ຮາກຖານການຜະລິດ ທັງເປັນການສ້າງຄວາມເຂັ້ມແຂງໃຫ້ບັນດາສູນ, ສະຖານີ. ຫ້າມສັບຊ້ອນເອົາພະນັກງານທີ່ບໍ່ຫ້າວຫັນ, ພະນັກງານທີ່ເສຍທາດເສື່ອມຄຸນ ປະກອບໃຫ້ສູນ, ສະຖານີ. ໃນກໍລະນີ ສູນ, ສະຖານີ ມີພະນັກງານ ຕົກໃນກໍລະນີດັ່ງກ່າວ ກໍໃຫ້ດຳເນີນການສຶກສາອົບຮົມ ຖ້າບໍ່ມີການປັບປຸງປ່ຽນແປງ ກໍໃຫ້ພິຈາລະນາຕາມຫຼັກການ ກ່ຽວກັບວຽກງານພະນັກງານຄື: ມີຂຶ້ນ-ມີລົງ ມີເຂົ້າ-ມີອອກ;

4. ການຫັນພະນັກງານລົງສູນ, ສະຖານີ ນັ້ນ ໃຫ້ມີການສັບປ່ຽນ, ໝູນວຽນກັນຢ່າງຕໍ່ເນື່ອງ ໂດຍມີຄາດໝາຍ, ແຜນວຽກ, ກຳນົດເວລາ ແລະ ມີນະໂຍບາຍ ຢ່າງຈະແຈ້ງ ຖືເອົາຜົນສຳເລັດຂອງການປະຕິບັດໜ້າທີ່ ຢູ່ຮາກຖານ ເປັນໄມ້ຫຼາວັດແທກ, ເປັນພື້ນຖານໃຫ້ແກ່ການເລືອກເຟັ້ນເປັນເປົ້າໝາຍຂະຫຍາຍເຂົ້າພັກ, ບຳລຸງກໍ່ສ້າງ, ເປັນມາດຖານເງື່ອນໄຂໜຶ່ງ ຂອງພະນັກງານນຳພາ-ຄຸ້ມຄອງ ທີ່ຈະຈັດວາງສັບຊ້ອນ ເຂົ້າໃນຕຳແໜ່ງງານຕ່າງໆ ຢູ່ໃນກົງຈັກການຈັດຕັ້ງ ຂອງພັກ-ລັດ ແຕ່ລະຂັ້ນ;

5. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ ຫັນເອົາງົບປະມານ, ກິດຈະກຳໂຄງການຮ່ວມມືກັບຕ່າງປະເທດທີ່ມີແລ້ວ, ຈັດສັນງົບປະມານຂອງລັດ, ປະກອບພາຫະນະ, ອຸປະກອນເຄື່ອງມືຮັບໃຊ້ວິຊາການ ໃຫ້ບັນດາສູນ, ສະຖານີ; ພ້ອມກັນນັ້ນ, ກໍໃຫ້ເອົາໃຈໃສ່ດຶງດູດ, ຍາດແຍ່ງການຊ່ວຍເຫຼືອຈາກປະເທດເພື່ອນມິດ ແລະ ສາກົນ, ລະດົມການລົງທຶນຈາກພາກເອກະຊົນ ມາພັດທະນາສູນ, ສະຖານີ ເພື່ອໃຫ້ສາມາດເຄື່ອນໄຫວວຽກງານ ໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິຜົນ;

6. ໃຫ້ບັນດາສູນ, ສະຖານີ ສຸມໃສ່ການຄົ້ນຄວ້າ, ການສາທິດ, ການຜະລິດແນວພັນ, ການບໍລິການດ້ານເຕັກນິກ-ວິຊາການ ໃສ່ບັນດາພືດ-ສັດ, ໄມ້ ທີ່ນອນໃນບັນຊີສົ່ງເສີມການຜະລິດ ເພື່ອທົດແທນການນໍາເຂົ້າ, ບັນດາພືດ-ສັດ ທີ່ມີການເຊັນສັນຍາທີ່ພົວພັນກັບອະນາໄມ ແລະ ສຸຂານາໄມພືດ (SPS) ກັບບັນດາປະເທດຄູ່ຄ້າແລ້ວ ເຊັ່ນ: ປະເທດ ສປ ຈີນ ຈໍານວນ 9 ລາຍການ ປະເທດ ສສ ຫວຽດນາມ ຈໍານວນ 16 ພືດ ແລະ ຣາຊະອານາຈັກໄທ ຈໍານວນ 15 ພືດ ຢ່າງເປັນຮູບປະທໍາ;
7. ຊຸກຍູ້, ສົ່ງເສີມ ໃຫ້ສູນ, ສະຖານີ ທີ່ມີເງື່ອນໄຂ ມີນັກວິຊາການ, ນັກຄົ້ນຄວ້າ ເຊັນສັນຍາຜູກພັນສອງສົ້ນ ກັບນິຕິບຸກຄົນ, ນັກລົງທຶນ, ຜູ້ປະກອບການ ແລະ ຊາວກະສິກອນ, ຟາມ ເພື່ອຄົ້ນຄວ້າ, ສະໜອງແນວພັນ, ບໍລິການດ້ານເຕັກນິກ-ວິຊາການ ແລະ ມີສິດໄດ້ຮັບໝາກຜົນການແບ່ງປັນຈາກການຄົ້ນຄວ້າ, ການບໍລິການດັ່ງກ່າວ ທີ່ສົມເຫດສົມຜົນ; ດຶງດູດເອົາເຄືອຂ່າຍ ຊາວກະສິກອນລາວ, ກຸ່ມການຜະລິດ ຫຼື ສະຫະກອນ ເຂົ້າເປັນພາຄີ, ເປັນຄູ່ຮ່ວມພັດທະນາ ເພື່ອໃຫ້ການຄົ້ນຄວ້າ, ການບໍລິການຂອງສູນ, ສະຖານີ ຕິດພັນກັບຕະຫຼາດ ແລະ ການຜະລິດສິນຄ້າ;
8. ໃຫ້ຫ້ອງການ, ບັນດາກົມ, ສະຖາບັນ, ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນຫຼວງວຽງຈັນ ຮີບຮ້ອນຈັດຕັ້ງການເຜີຍແຜ່, ເຊື່ອມຊຶມ ຄໍາສັ່ງສະບັບນີ້ ໃຫ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ທົ່ວເຖິງ;
9. ໃຫ້ ກົມຈັດຕັ້ງ ແລະ ພະນັກງານ ເປັນໃຈກາງສັງລວມລາຍຊື່ພະນັກງານ-ລັດຖະກອນ ຂອງຫ້ອງການ, ບັນດາກົມ, ສະຖາບັນ ທີ່ຈະທັນລົງບັນດາສູນ, ສະຖານີຕ່າງໆ ເພື່ອນໍາສະເໜີ ລັດຖະມົນຕີອະນຸມັດຕາມລະບຽບການ. ສໍາລັບຢູ່ທ້ອງຖິ່ນ ແມ່ນມອບໃຫ້ຫ້ອງການບໍລິຫານ ແລະ ຈັດຕັ້ງເປັນໃຈກາງສັງລວມໃຫ້ ຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ, ນະຄອນຫຼວງວຽງຈັນ ເພື່ອນໍາສະເໜີ ເຈົ້າແຂວງ, ເຈົ້າຄອງ ອະນຸມັດຕາມລະບຽບການ;
10. ໃຫ້ ກົມຈັດຕັ້ງ ແລະ ພະນັກງານ ເປັນເຈົ້າການປະສານສົມທົບກັບກົມກວດກາ ຕິດຕາມ, ກວດກາ, ຊຸກຍູ້ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ ໃຫ້ຄະນະນໍາກະຊວງ ມີທິດຊີ້ນໍາຢ່າງທັນການ ແຕ່ລະໄລຍະ;
11. ຄໍາສັ່ງ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງກະສິກໍາ ແລະ ປ່າໄມ້

ລັດຖະມົນຕີ

ປອ. ເພັດ ພົມພິພັກ